# ຄວາມຮັກ, ການໃຫ້ອະໄພ ແລະ ຄວາມສາມັກຄີທຳ



ບົດທີ 13 ສຳລັບສະບາໂຕທີ 26 ເດືອນກັນຍາ, 2026



“ຂໍໃຫ້ພຣະຄຸນຂອງອົງ
ພຣະເຢຊູຄຣິດເຈົ້າ ຄວາມ
ຮັກຂອງພຣະເຈົ້າ ແລະ
ຄວາມສາມັກຄີທຳກັບພຣະ
ວິນຍານບໍຣິສຸດເຈົ້າ ຈົ່ງ
ສະຖິດຢູ່ກັບພວກເຈົ້າທຸກ
ຄົນເທີ້ນ.”
2 ໂກຣິນໂທ 13:14

ຈາກຈົດໝາຍທັງໝົດ 14 ສະບັບ, ເພິ່ນໄດ້ກ່າວລົງທ້າຍທັງ 13 ສະບັບ ໃສ່ຈົດໝາຍຂອງເພິ່ນແມ່ນ: ການຂອບພຣະຄຸນພຣະເຈົ້າ, ຂໍໃຫ້ພຣະຄຸນຂອງພຣະອົງນັ້ນສະຖິດຢູ່ກັບທ່ານທັງຫລາຍ (Rom. 16:24; 1 ກຣທ 16:23; ຄລຕ 6:18; ອຟຊ 6:24; ຟລປ 4:23; ກລຊ 4:18; 1 ທສລນ 5:28; 2 ທສລນ 3:18; 1 ຕມທ 6:21; 2 ຕມທ 4:22; ຕຕ 3:15 ; ຟລມ 1:25; ຮລ 13:25).



ຢ່າງໃດກໍ່ຕາມ ໃນຈົດໝາຍສະບັບທີສອງເຖິງຊາວໂກຣິນໂທ ເພິ່ນໄດ້ຍົກເວັ້ນສິ່ງສຳຄັນໄວ້ນັ້ນກໍ່ຄື ຄຳເວົ້າທີ່ລົງທ້າຍຂອງເພິ່ນລວມເຖິງພຣະຄຸນ, ຄວາມຮັກ ແລະ ການສາມັກຄີທຳທັງໝົດໃນພຣະເຈົ້າຄື: ພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍຣິສຸດ. (2 ກຣທ 13:14).





ຄວາມຍິ່ງໃຫຍ່ຂອງພຣະເຢຊູຄຣິດ



ຄວາມຮັກຂອງພຣະເຈົ້າ



ການສາມັກຄີທຳໃນພຣະວິນຍານບໍຣິສຸດ



ພຣະອົງຈະຊົງຢູ່ທ່າມກາງພວກເຮົາທັງຫລາຍ

# ຄວາມຍິ່ງໃຫຍ່ຂອງພຣະຄຣິດ

“ເພາະວ່າ ເຈົ້າທັງຫລາຍຮູ້ຈັກພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາແລ້ວວ່າ ເຖິງແມ່ນວ່າ ພຣະອົງຊົງຮັ່ງມີ ພຣະອົງກໍຍັງຊົງຍອມກາຍເປັນຄົນຍາກຈົນ ເພາະເຫັນແກ່ເຈົ້າທັງຫລາຍ ເພື່ອເຈົ້າທັງຫລາຍຈະໄດ້ກາຍເປັນຄົນຮັ່ງມີ ເນື່ອງຈາກຄວາມຍາກຈົນຂອງພຣະອົງ.” 2 ໂກຣິນໂທ 8:9

ອຈ ໂປໂລ ເລີ່ມຕົ້ນ ແລະ ຈົບຈົດໝາຍສະບັບທີສອງເຖິງຊາວໂກຣິນໂທ ໂດຍກ່າວເຖິງພຣະຄຸນຂອງພຣະຄຣິດ (2 ກຣທ 1:2; 13:14). ພຣະຄຸນນີ້ປະກອບດ້ວຍຫຍັງແດ່?



ພຣະອົງສະຫລະຄວາມສຸກໃນສະຫວັນ ແລະ ຊົງກາຍເປັນຄົນຍາກຈົນ ເພື່ອພວກເຮົາຈະໄດ້ສືບທອດຊັບສົມບັດຂອງພຣະອົງ riches (2 ກຣທ 8:9)



ພຣະອົງຊົງດຳເນີນໄປໃນໂລກຂອງພວກເຮົາ, ເພື່ອພວກເຮົາຈະໄດ້ຮູ້ຈັກພຣະອົງ, ຮັກພຣະອົງ ແລະ ຮຽນຮູ້ຈາກພຣະອົງ (ຢຮ 15:12)



ພຣະອົງຊົງຖ່ອມໂຕລົງ ແລະ ຊົງເຊື່ອຟັງຈົນເຖິງຄວາມຕາຍ, ເພື່ອຍົກໂທດຄວາມບາບຂອງພວກເຮົາ ແລະ ປະທານຊີວິດອັນນິຣັນດອນໃຫ້ (ຟລປ 2:8)

ແລ້ວຈະເກີດຫຍັງຂຶ້ນກັບພວກເຮົາຜູ້ທີ່ໄດ້ຮັບພຣະຄຸນຂອງພຣະອົງ?

- ພວກເຮົາໄດ້ຮັບການຊຳລະໃຫ້ບໍຣິສຸດແລ້ວ(ໂຣມ. 3:24; ອຟຊ 1:7)
- ພວກເຮົາຊື່ນຊົມຍິນດີໃນຄວາມຫວັງ (ໂຣມ 5:2)
- ພວກເຮົາໄດ້ຮັບຣິດເດດຈາກພຣະຄຣິດ (2 ກຣທ 12:9)
- ຄວາມບາບບໍ່ສາມາດຄອບງຳພວກເຮົາໄດ້ (ໂຣມ 6:14)
- ພວກເຮົາຈະຖືກຄອບຄອງຊີວິດໂດຍພຣະເຢຊູຜູ້ດຽວ (ໂຣມ 5:17, 21)



# ຄວາມຮັກຂອງພຣະເຈົ້າ

"ຜູ້ໃດທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ ເພາະພຣະເຈົ້າຊົງເປັນ ຄວາມຮັກ." 1 ໂຢຮັນ 4:8



ພຣະຄຳພີໄດ້ປະກາດຢ່າງໜັກແໜ້ນວ່າພຣະເຈົ້າຊົງເປັນຄວາມຮັກ(1 ຢຮ 4:8). ພຣະອົງຊົງປະທານຄວາມຮັກນັ້ນລົງທີ່ສັບພະທຸກສິ່ງທີ່ພຣະອົງໄດ້ຊົງສ້າງຂຶ້ນ, ພວກເຮົາສາມາດເຫັນໄດ້ໃນຫົວໃຈຂອງພວກເຮົາເອງ, ໃນຄວາມສຳພັນລະຫວ່າງພໍ່ກັບແມ່ນທີ່ມີຕໍ່ລູກ, ໃນດອກໄມ້ທີ່ສວຍງາມ ແລະ ໃນໝູ່ສັດນາໆປະການ...





ອຈ ໂປໂລ ໄດ້ສອນຊາວໂກຣິນໂທວ່າ (ແລະແນ່ນອນລວມເຖິງພວກເຮົາພ້ອມ) ທີ່ໄດ້ຖືກຄວາມຮັກສ້າງຂຶ້ນ(1 ກຣທ 8:1); ດ້ວຍວ່າບໍ່ມີສິ່ງໃດມີຄ່າ ຖ້າປາສະຈາກຄວາມຮັກແລ້ວ(1 ກຣທ 13:1-3); ແລະທຸກສິ່ງຄວນກະທຳດ້ວຍຄວາມຮັກທີ່ມາຈາກພຣະເຈົ້າ (1 ກຣທ 16:14).

ແຕ່ບໍ່ຕ້ອງສົງໃສເລີຍວ່າ ການສະແດງອອກເຖິງຄວາມຮັກຂອງພຣະເຈົ້າທີ່ຍິ່ງໃຫຍ່ທີ່ສຸດນັ້ນ ສາມາດເຫັນໄດ້ໃນການທີ່ພຣະຄຣິດຖວາຍພຣະອົງເອງເປັນເຄື່ອງບູຊາໄຖ່ບາບຂອງພວກເຮົາ (ຢຮ 3:16).

ຕົວຢ່າງນີ້ນຳພາພວກເຮົາໃຫ້ປະຕິບັດຕໍ່ຜູ້ອື່ນດ້ວຍຄວາມຮັກແບບດຽວກັນທີ່ພຣະອົງຊົງສະແດງໃຫ້ພວກເຮົາເຫັນ (1 ຢຮ 3:16)

# ຄວາມຮັກຂອງພຣະເຈົ້າ

"ໃນສຸດທ້າຍນີ້ ພີ່ນ້ອງທັງຫລາຍເອີຍ ເຮົາຂໍລາພວກເຈົ້າກ່ອນ ຈົ່ງປັບປຸງໃຫ້ຕົວຈະເລີນຂຶ້ນ ຈົ່ງຟັງຄຳຮ້ອງຂໍຂອງເຮົາ ຈົ່ງເປັນນໍ້າໜຶ່ງໃຈດຽວກັນ ຈົ່ງຢູ່ຮ່ວມກັນດ້ວຍຄວາມສະຫງົບສຸກ ແລະພຣະເຈົ້າຜູ້ຊົງຮັກ ແລະຊົງປະທານສັນຕິສຸກ ຈະຊົງສະຖິດຢູ່ນຳເຈົ້າທັງຫລາຍ." 2 ໂກຣິນໂທ 13:11

## ອຈ ໂປໂລ ສະແດງພຣະເຈົ້າໃຫ້ເຫັນໃນຫລາຍແງ່ມຸມ

- "ພຣະເຈົ້າແຫ່ງຄວາມອົດທົນ" (ໂຣມ 15:5)
- "ພຣະເຈົ້າແຫ່ງຄວາມຫວັງ" (ໂຣມ 15:13)
- "ພຣະເຈົ້າແຫ່ງສັນຕິສຸກ" (ໂຣມ 15:33)
- "ພຣະເຈົ້າຜູ້ຊົງ […] ເຕັມໄປດ້ວຍຄວາມເມດຕາ"(2ກຣທ 1:3)
- "ພຣະເຈົ້າຜູ້ຊົງປອບໂຍນ" (2 ກຣທ 1:3b)
- "ພຣະເຈົ້າແຫ່ງຄວາມຮັກ" (2 ກຣທ 13:11)



ພຣະບິດາໄດ້ປະທານຄວາມຮັກໃຫ້ແກ່ພວກເຮົາ (1 ຢຮ 3:1)



ພຣະຄຣິດຊົງເຕີມເຕັມພວກເຮົາດ້ວຍຄວາມຮັກຂອງພຣະອົງຢ່າງເຕັມປ່ຽມ (ອຟຊ 3:19)



ພຣະເຈົ້າບໍ່ພຽງແຕ່ຊົງມີຄຸນລັກສະນະເຫລົ່ານີ້ທັງໝົດ, ແຕ່ພຣະອົງຍັງຊົງເປັນແຫລ່ງກຳເນີດທີ່ນຳມາເຊິ່ງຄຸນລັກສະນະເຫລົ່ານີ້ທັງໝົດແກ່ພວກເຮົາ ດັ່ງທີ່ພວກເຮົາໄດ້ເຫັນແລ້ວ ພຣະເຈົ້າຊົງເປັນຄວາມຮັກ ແຕ່ພຣະອົງຍັງຊົງເປັນພຣະເຈົ້າແຫ່ງຄວາມຮັກ



ພຣະວິນຍານບໍຣິສຸດປະທານຄວາມຮັກຂອງພຣະອົງລົງມາເໜືອພວກເຮົາ(ໂຣມ 5:5)

# ຄວາມສາມັກຄີທຳໃນພຣະວິນຍານບໍຣິສຸດ

"ຂໍໃຫ້ພຣະຄຸນຂອງອົງພຣະເຢຊູຄຣິດເຈົ້າ ຄວາມຮັກຂອງພຣະເຈົ້າ ແລະຄວາມສາມັກຄີທຳກັບພຣະວິນຍານບໍຣິສຸດເຈົ້າ ຈົ່ງສະຖິດຢູ່ກັບພວກເຈົ້າທຸກຄົນເທີ້ນ." 2 ໂກຣິນໂທ 13:14

ອຈ ໂປໂລ ປາດຖະໜາໃຫ້ສິ່ງເຫລົ່ານີ້ຢູ່ກັບພວກເຮົາ: ລັກສະນະຂອງພຣະອົງ (ພຣະຄຣິດ); ຄວາມຮັກຂອງພຣະອົງ (ພຣະເຈົ້າ); ແລະການສາມັກຄີທຳ ທີ່ມາຈາກພຣະເຈົ້າ? (2 ກຣທ 13:14).
ເພື່ອຄວາມສອດຄ້ອງກັນ ອຈ ໂປໂລ ກຳລັງເວົ້າເຖິງພຣະລັກສະນະຂອງ (ພຣະວິນຍານບໍຣິສຸດ)

ໃນຈົດໝາຍເຖິງຊາວໂກຣິນໂທ ອຈ ໂປໂລອ້າງເຖິງພຣະວິນຍານບໍຣິສຸດຫລາຍກວ່າ 40 ຄັ້ງ, ເພິ່ນໄດ້ກ່າວເຖິງພຣະອົງໃນລັກສະນະສ່ວນບຸກຄົນບໍ່ແມ່ນເປັນຣິດເດດພະລັງທີ່ພະເຈົ້າສົ່ງອອກ



- ພຣະອົງຊົງຕຽມຜູ້ຄົນໃຫ້ພ້ອມສຳລັບພັນທະກິດ (1 ກຣທ 2:4)
- ພຣະອົງຊົງເປີດເຜີຍສິ່ງທີ່ເລິກເຊິ່ງຂອງພຣະອົງແກ່ພວກເຮົາ (1 ກຣທ 2:10)
- ພຣະອົງຊົງສອນພວກເຮົາ (1 ກຣທ 2:13)
- ພຣະອົງຊົງສະຖິດຢູ່ທ່າມກາງພວກເຮົາ (1 ກຣທ 3:16)
- ພຣະອົງຊົງຮ່ວມມືກັບພຣະຄຣິດເພື່ອຄວາມຊອບທຳ ຂອງພວກເຮົາ (1 ກຣທ 6:11)
- ພຣະອົງປະທານພຣະວິນຍານບໍຣິສຸດ (1 ກຣທ 12:7-11)
- ພຣະອົງປະທັບຕາເພື່ອຄວາມລອດໃຫ້ພວກເຮົາ (2 ກຣທ 1:22)
- ຊົງປະທັບພຣະບັນຍັດໄວ້ໃນໃຈຂອງພວກເຮົາ (2 ກຣທ 3:3)
- ຊົງປະທານຊີວິດໃໝ່ໃນພຣະຄຣິດໃຫ້ແກ່ພວກເຮົາ (2 ກຣທ 3:6)
- ພຣະອົງຊົງປະທານອິດສະຫລະພາບຈາກຄວາມບາບໃຫ້ແກ່ພວກເຮົາ (2 ກຣທ 3:17)

# ຈະຢູ່ທ່າມກາງພວກເຮົາທັງຫລາຍ

"ຄືຜູ້ທີ່ພຣະເຈົ້າ ພຣະບິດາເຈົ້າໄດ້ຊົງເລືອກໄວ້ແລ້ວ ຕາມທີ່ພຣະອົງໄດ້ຊົງຮູ້ລ່ວງໜ້າໄວ້ກ່ອນ ເພື່ອພຣະວິນຍານຈະຊົງຊຳລະໃຫ້ບໍຣິສຸດ ຈະໃຫ້ນົບນ້ອມເຊື່ອຟັງພຣະເຢຊູຄຣິດເຈົ້າ ແລະຈະໃຫ້ຮັບການຊຳລະດ້ວຍພຣະໂລຫິດຂອງພຣະອົງ. ຂໍພຣະຄຸນ ແລະສັນຕິສຸກຈົ່ງບັງເກີດທະວີຄູນແກ່ເຈົ້າທັງຫລາຍເທີ້ນ."
1 ເປໂຕ 1:2



ເຖິງວ່າພວກເຮົາຈະຄຸ້ນເຄີຍກັບການກ່າວເຖິງພຣະເຈົ້າສາມພຣະພາກ ຕາມລຳດັບ "ພຣະບິດາ, ພຣະເຢຊູ, ພຣະວິນຍານບໍຣິສຸດ" (ມທ 28:19), ແຕ່ ອຈ ໂປໂລກ່າວວ່າ "ພຣະເຢຊູ, ພຣະບິດາ, ພຣະວິນຍານບໍຣິສຸດ" (2 ກຣທ 13:14), ແລະ ທ່ານ ເປໂຕ ກ່າວວ່າ "ພຣະບິດາ, ພຣະວິນຍານບໍຣິສຸດ, ພຣະເຢຊູ" (1 ປຕ 1:2).

ບໍ່ມີລຳດັບຊັ້ນລະຫວ່າງທັງສາມພຣະພາກ; ແຕ່ລະພຣະອົງມີບົດບາດທີ່ແຕກຕ່າງກັນໃນແຜນການແຫ່ງຄວາມລອດ, ແຕ່ທັງສາມພຣະອົງນັ້ນມີລັກສະນະນິໄສ ແລະພຣະປະສົງອັນດຽວກັນ.

**ພຣະຄຸນ**
- ຈາກພຣະບິດາ (1 ກຣທ 1:3)
- ຈາກພຣະບຸດ (1 ກຣທ 1:3)
- ຈາກພຣະວິນຍານບໍຣິສຸດ (ຮຣ 10:29 )

**ຄວາມຮັກ**
- ຈາກພຣະບິດາ (1 ຢຮ 2:15)
- ຈາກພຣະບຸດ (ໂຣມ 8:35)
- ຈາກພຣະວິນຍານບໍຣິສຸດ (ໂຣມ 15:30)

**ຄວາມສາມັກຄີທຳ**
- ຈາກພຣະບິດາ (1 ຢຮ 1:3)
- ຈາກພຣະບຸດ(1 ຢຮ 1:3)
- ຈາກພຣະວິນຍານບໍຣິສຸດ (ຟລປ 2:1)

ດັ່ງນັ້ນ ອຈ ໂປໂລຈຶ່ງຈົບຈົດໝາຍຂອງເພິ່ນ ດ້ວຍຄວາມປາດຖະໜາໃຫ້ພຣະຄຸນ, ຄວາມຮັກ, ແລະ ຄວາມສາມັກຄີທຳຂອງພຣະເຈົ້າທັງໝົດຢູ່ກັບພວກເຮົາ (2 ກຣທ 13:14)

# EGW (Evangelism, p. 615)

"ພວກເຮົາບໍ່ສາມາດພັນລະນາເຖິງພຣະບິດາໄດ້ດ້ວຍສິ່ງຂອງເທິງແຜ່ນດິນໂລກ. ພຣະບິດາຄືຄວາມບໍລິບູນທັງໝົດຂອງສະພາບພຣະເຈົ້າ ແລະ ບໍ່ສາມາດເບິ່ງເຫັນໄດ້ດ້ວຍສາຍຕາຂອງມະນຸດ. ພຣະບຸດຄືຄວາມບໍລິບູນທັງໝົດຂອງສະພາບພຣະເຈົ້າທີ່ໄດ້ປະກົດອອກມາ. [...] ພຣະຜູ້ຊ່ວຍເລົ້າໂລມໃຈທີ່ພຣະຄຣິດຊົງສັນຍາວ່າຈະສົ່ງພຣະອົງມາຫຼັງຈາກທີ່ພຣະອົງໄດ້ຊົງສະເດັດຂຶ້ນສູ່ສະຫວັນ ນັ້ນຄືພຣະວິຍານໃນຄວາມບໍລິບູນທັງໝົດຂອງສະພາບພຣະເຈົ້າ, ເຮັດໃຫ້ລິດທານຸພາບແຫ່ງພຣະຄຸນຂອງພຣະເຈົ້າປະກົດອອກມາແກ່ທຸກຄົນທີ່ຮັບ ແລະ ເຊື່ອໃນພຣະຄຣິດໃນຖານະພຣະຜູ້ຊ່ວຍໃຫ້ລອດສ່ວນຕົວ. ຢ່າງມີສາມ ພຣະອົງ ທີ່ມີຊີວິດຢູ່ຂອງຕຣີເອກະພາບແຫ່ງສະຫວັນ; ໃນພຣະນາມຂອງລິດທານຸພາບອັນຍິ່ງໃຫຍ່ທັງສາມນີ້ --ພຣະບິດາ, ພຣະບຸດ, ແລະ ພຣະວິຍານບໍຣິສຸດ-- ຜູ້ທີ່ຮັບພຣະຄຣິດດ້ວຍຄວາມເຊື່ອທີ່ມີຊີວິດຈະໄດ້ຮັບການບັບຕິດສະມາ, ແລະ ລິດທານຸພາບເຫຼົ່ານີ້ຈະຮ່ວມມືກັບບັນດາຜູ້ເຊື່ອຟັງແຫ່ງສະຫວັນໃນຄວາມພະຍາຍາມຂອງພວກເຂົາທີ່ຈະດຳເນີນຊີວິດໃໝ່ໃນພຣະຄຣິດ."